ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ປະຊາທິປະໄຕ ວັດທະນະຖາວອນ

--------------

ກະຊວງ ກະສິກຳ ແລະ ປ່າໄມ້

ຫ້ອງການ

ເລກທີ .1503. /ຫກ

ນະຄອນຫຼວງວຽງຈັນ, ວັນທີ 16-JUL 2013

## ແຈ້ງການແນະນຳ

ຮຽນ: ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

ເລື່ອງ: ການແຈ້ງເຕືອນການນຳເຂົ້າ ແລະ ສົ່ງອອກພືດ, ຜະລິດຕະພັນພືດ ແລະ ຜະລິດຕະພັນອາຫານທີ່ມີຕົ້ນກຳເນີດຈາກພືດ ໄປບັນດາປະເທດ ສະຫະພາບ ເອີຣົບ ຫຼື ອີຢູ (EU).

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09/12/2008.
- ອີງຕາມ ດຳລັດ ແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31/5/2012.
- ອີງຕາມ ແຈ້ງການຂອງຄະນະກຳມະທິການອີຢູ ກ່ຽວກັບ ສຸຂະພາບ ແລະ ຜູ້ຊົມໃຊ້ ສະບັບເລກທີ sanco.ddg2.e.5/LB/iz(2013)303214.
- ອີງຕາມ ລາຍງານ ຂອງກົມປູກຝັງ ສະບັບເລກທີ 1067/ກປຝ, ລົງວັນທີ 12 ກໍລະກົດ 2013

ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຂໍແຈ້ງມາຍັງທ່ານຊາບວ່າ ໃນປະຈຸບັນການຜະລິດພືດເວົ້າລວມ, ເວົ້າສະເພາະ ກໍຄື ຜັກ ຢູ່ ສປປ ລາວ ເຫັນວ່າເປັນຂະບວນພືດພື້ນສົມຄວນ ແລະ ຜະລິດຕະພັນພືດຜັກ ຂອງ ສປປ ລາວ ກໍເປັນທີ່ຍອມຮັບຂອງຜູ້ບໍລິໂພກ ທັງພາຍໃນ ແລະ ຕ່າງປະເທດສູງຂຶ້ນ. ເນື່ອງຈາກວ່າ ຫຼາຍໆພາກສ່ວນໄດ້ໃຫ້ຄວາມສົນໃຈ ແລະ ປະຕິບັດຕາມ ຂັ້ນຕອນການຜະລິດ ທີ່ມີຄວາມປອດໄພຕໍ່ຜູ້ຜະລິດ ແລະ ຜູ້ບໍລິໂພກ ຄືໄດ້ປະຕິບັດຕາມ ມາດຕະຖານ ການຜະລິດກະສິກຳທີ່ດີ ແລະ ມາດຕະຖານການຜະລິດກະສິກຳອິນຊີ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບຮອງເອົາຈາກມາດຕະຖານສາກົນ ແລະ ໄດ້ນຳມາໃຊ້ ແລະພັດທະນາເປັນຂອງປະເທດ ໃຫ້ມີຄວາມແທດເໝາະກັບສະພາບ ແລະ ເງື່ອນໄຂຂອງ ສປປ ລາວ.

ເພື່ອສ້າງຄວາມເຊື່ອໝັ້ນ ແລະ ປົກປ້ອງພາບພົດຂອງຜະລິດຕະພັນພືດ ທີ່ກຳລັງມີທ່າອ່ຽງສົ່ງອອກໄປສູ່ຕະຫຼາດສາກົນ ນັບມື້ນັບຂະຫຍາຍໃຫຍ່ນັ້ນ, ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນເສດຖະກິດ ໄດ້ພ້ອມກັນເອົາໃຈໃສ່ ແລະ ສະກັດກັ້ນການນຳເຂົ້າພືດ ແລະ ຜະລິດຕະພັນພືດ ທີ່ມາຈາກຕ່າງປະເທດ ແລ້ວສົ່ງອອກໃນນາມ ສ ປ ປ ລາວ ໂດຍສະເພາະການສົ່ງອອກຕໍ່ ໄປຫາກຸ່ມປະເທດອີຢູ (EU). ທຸກໆຊິ້ນສ່ວນຂອງ ພືດ ແລະ ຜະລິດຕະພັນພືດ ທີ່ຢູ່ໃນສະພາບສົດ ຫຼື ແຫ້ງ ເຊັ່ນ ແກ່ນ, ເມັດ, ໃບ, ກ້ານໃບ, ຫົວ, ຮາກພືດ, ໃນການສົ່ງອອກ ແລະ ນຳເຂົ້າ ແມ່ນມີຄວາມສ່ຽງສູງຕໍ່ການຕິດເຊື້ອພະຍາດພືດ, ແມງໄມ້ສັດຕູພືດ ແລະ ການຕົກຄ້າງຂອງສານເຄມີປາບສັດຕູພືດ ມີຄື: ຜັກບົວລະພາ (basil), ໝາກເຜັດ (Chilli peppers),

ຫອມປ້ອມ (coriander), ຫອມລາບ (mint), ໝາກເຂືອກ (okra), ຜັກຊີຝະລັ່ງ (parsley), ໝາກຖົ່ວດິນ (groundnuts), ໝາກກ້ວຍ (banana) ແລະ ໝາກຜັກຖົ່ວຍາວ (yard long bean).

ຜ່ານມາ ຂະແໜງການກະສິກໍາ ແລະ ປ່າໄມ້ ກໍ່ເຄີຍໄດ້ຮັບການແຈ້ງເຕືອນ ຈາກກຸ່ມປະເທດອີຢູ ກ່ຽວກັບການຕິດເຊື້ອພະຍາດ, ແມງໄມ້ ແລະ ຍິດຕົກຄ້າງຂອງສານເຄມີປາບສັດຕູພືດ ທີ່ຕິດໄປກັບຜະລິດຕະພັນພືດ ຈໍານວນໜຶ່ງ ທີ່ໄດ້ສົ່ງອອກໄປຈາກ ສປປ ລາວ. ພ້ອມນັ້ນ, ຍັງໄດ້ຮັບການແຈ້ງເຕືອນໃຫ້ລະມັດລະວັງ ກ່ຽວກັບຄວາມສາມາດ ເປັນໄປໄດ້ ຂອງສິນຄ້າຈາກ ບາງປະເທດໃກ້ຄຽງ ທີ່ໄດ້ນໍາເຂົ້າມາ ສປປ ລາວ ແລ້ວສົ່ງອອກໄປ ໃນນາມຜະລິດຕະພັນພືດ ຂອງສປປ ລາວ ໂດຍສະເພາະ ຕາມການແຈ້ງເຕືອນຂອງປະເທດປາຍທາງ ແມ່ນສິນຄ້າພືດຜັກ ຈາກ ສສ ຫວຽດນາມ ແລະ ລາດຊະອານາຈັກໄທ.

ໃນກໍລະນີຜູ້ນໍາເຂົ້າພືດ ຫຼື ຜະລິດຕະພັນພືດ ທີ່ມີຈຸດປະສົງສົ່ງອອກຕໍ່ໄປປະເທດທີສາມ ໃຫ້ປະຕິບັດຕາມ ດໍາລັດ ແນະນໍາປະຕິບັດກົດໝາຍ ວ່າດ້ວຍການປ້ອງກັນພືດຢ່າງເຄັ່ງຄັດ, ເດັດຂາດ ບໍ່ໃຫ້ປ່ຽນແຫຼ່ງກໍາເນີດຂອງສິນຄ້າ, ສິນຄ້າມາຈາກປະເທດໃດ ກໍ່ໃຫ້ລະບຸຢ່າງຈະແຈ້ງ ໃສ່ໃນເອກະສານສົ່ງອອກຕໍ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງໃນການຜະລິດ, ການສົ່ງອອກ ແລະ ນໍາເຂົ້າຜະລິດຕະພັນພືດ ໃຫ້ປະຕິບັດຕາມຄໍາສັ່ງແນະນໍາສະບັບນີ້ ຢ່າງມີປະສິດທິຜົນສູງ ໃນການປົກປ້ອງຜະລິດຕະພັນຂອງ ສປປ ລາວ ພ້ອມທັງຮັບປະກັນໃນການສະກັດກັ້ນ ແລະ ຈໍາກັດການນໍາເຂົ້າສິນຄ້າທີ່ເປັນພືດ ຫຼື ຜະລິດຕະພັນພືດ ຫຼື ຜະລິດຕະພັນສໍາເລັດຮູບທີ່ປຸງແຕ່ງມາຈາກພືດ ຂອງຕ່າງປະເທດ ທີ່ຂັດກັບລະບຽບ ແລະ ກົດໝາຍຂອງສປປ ລາວ.

ຫົວໜ້າຫ້ອງການກະຊວງ ກະສິກໍາ ແລະ ປ່າໄມ້

ຄໍາພັນ ເພື້ອນສິດທິດາ

<u>ບ່ອນສົ່ງ</u>:

| | |
|---|---|
| - ຫ້ອງການອໍານວຍ ລັດຖະບານ | 1 ສະບັບ "ເພື່ອຊາບ ແລະ ໃຊ້ຕາງລາຍງານ" |
| - ທ່ານລັດຖະມົນຕີ ວ່າການ ແລະ ຊ່ວຍວ່າການ ກະຊວງ ກ.ປ. | ທ່ານລະ 1 ສະບັບ "ເພື່ອຊາບ ແລະ ໃຊ້ຕາງລາຍງານ" |
| - ຫ້ອງການ ກະຊວງ ອຸດສະຫະກໍາ ແລະ ການຄ້າ | 1 ສະບັບ "ເພື່ອລາຍງານ" |
| - ຫ້ອງການ ກະຊວງ ການເງິນ | 1 ສະບັບ "ເພື່ອລາຍງານ" |
| - ກົມປູກຝັງ, ກະຊວງ ກປ | 1 ສະບັບ "ເພື່ອຕິດຕາມ" |
| - ກົມກວດກາ, ກະຊວງ ກປ | 1 ສະບັບ "ເພື່ອຕິດຕາມ" |
| - ເກັບມ້ຽນ | 1 ສະບັບ |